# ບົດຂ່າວ

Empowered lives.
Resilient nations.

## ສປປ ລາວ ຈັດກອງປະຊຸມຮ່ວມກັບກອງທຶນໃຫຍ່ຂອງໂລກ
## ເພື່ອພັກດັນປະເທດໄປສູ່ອະນາຄົດທີ່ຍືນຍົງ ແລະ
## ມີຄວາມພ້ອມຮັບມືກັບການປ່ຽນແປງດິນຟ້າອາກາດ

**ທີ່ນະຄອນຫຼວງວຽງຈັນ 12-14 ກຸມພາ 2019** – ລັດຖະບານແຫ່ງ ສປປ ລາວ ໂດຍຜ່ານກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໄດ້ຈັດກອງປະຊຸມປຶກສາຫາລືລະດັບຊາດກ່ຽວກັບອົງການຈຸດສຸມກອງທຶນສິ່ງແວດລ້ອມໂລກ (GEF) ແລະ ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ (GCF) ໃນອາທິດນີ້. ກອງປະຊຸມປຶກສາຫາລືດັ່ງກ່າວຖືວ່າເປັນຄັ້ງທຳອິດຂອງສອງກອງທຶນທີ່ໄດ້ປະຊຸມຮ່ວມກັນໃນປະເທດລາວ ເພື່ອປະເມີນການສະໜອງທຶນສຳລັບການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ.

ໃນປີຜ່ານມາ, ສອງກອງທຶນໄດ້ດຳເນີນງານຕ່າງໆ ເພື່ອປະສານຄວາມພະຍາຍາມ ເພື່ອປັບປຸງການສະໜອງທຶນແກ້ໄຂການປ່ຽນແປງດິນຟ້າອາກາດໃນປະເທດທີ່ກຳລັງພັດທະນາ ເຊັ່ນ ສປປ ລາວ.

“ປີກາຍນີ້, ພວກເຮົາໄດ້ຈັດກອງປະຊຸມຮ່ວມກັບກອງທຶນສິ່ງແວດລ້ອມໂລກ ເຊິ່ງພວກເຮົາໄດ້ສະໜອງໂອກາດໃຫ້ປະເທດຕ່າງໆ ເພິ່ງພາທຶນຈາກສອງກອງທຶນ. ມື້ນີ້, ພວກເຮົາມາທີ່ນີ້ ເພື່ອຕອບຮັບການນຳພາຂອງ ສປປ ລາວ ທີ່ສະແດງໃຫ້ເຫັນເຖິງການຄວາມຕ້ອງການໂອກາດນີ້”, ທ່ານ Clifford Polycarp, ຮອງຫົວໜ້າພະແນກແຜນງານລະດັບປະເທດ ຂອງ ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ.

ນອກຈາກນີ້, ກອງປະຊຸມຍັງເປັນຂີດໝາຍສຳຄັນສຳລັບແຜນງານສະໜັບສະໜຸນຄວາມກຽມພ້ອມຮັບມືກັບການປ່ຽນແປງດິນຟ້າອາກາດ ທີ່ໄດ້ຮັບທຶນຈາກ GCF ເຊິ່ງ ອົງການສະຫະປະຊາຊາດ ເພື່ອການພັດທະນາ ໄດ້ຈັດຕັ້ງປະຕິບັດໃນ ສປປ ລາວ ຕັ້ງແຕ່ປີ 2018. ໃນກອງປະຊຸມ, ລັດຖະບານ ຍັງໄດ້ນຳສະເໜີສາມເອກະສານໃໝ່ທີ່ສຳຄັນຄື: ແຜນງານຮ່ວມມືລະຫວ່າງ ສປປ ລາວ ແລະ ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ, ຂັ້ນຕອນທີ່ບໍ່ມີການຂັດຄ້ານ ແລະ ຄູ່ມືການຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງ. ບັນດາເອກະສານດັ່ງກ່າວ ໄດ້ຖືກອອກແບບເພື່ອຊ່ວຍແນະນຳລັດຖະບານ ແລະ ພາກສ່ວນກ່ຽວຂ້ອງກ່ຽວກັບບັນດາບູລິມະສິດ ແລະ ຂັ້ນຕອນສຳລັບການເຂົ້າເຖິງທຶນຂອງ ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ.

“ເອກະສານເຫຼົ່ານີ້ ເປັນເອກະສານພື້ນຖານສຳລັບປະເທດໃດໜຶ່ງ ທີ່ຕ້ອງການຮ່ວມວຽກກັບ ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ ເນື່ອງຈາກວ່າເປັນເອກະສານທີ່ເຮັດໃຫ້ປະເທດເຫຼົ່ານັ້ນໄດ້ນຳໃຊ້ ເພື່ອໃຫ້ພາກສ່ວນກ່ຽວຂ້ອງໄດ້ປະສານງານຢ່າງມີປະສິດທິພາບ ແລະ ໄດ້ຮັບຜົນປະໂຫຍດຈາກ GCF,” ທ່ານ Polycarp ກ່າວ.

ຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ, ທ່ານ ນາງ ຄາຣີນາ ອິມໂມເນັນ, ມີຄວາມຍິນດີກັບໂອກາດທີ່ ສປປ ລາວ ຈະໄດ້ຮັບຈາກການສະໜອງທຶນເພື່ອແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ. ທ່ານໄດ້ມີຄຳເຫັນວ່າ "ເນື່ອງຈາກວ່າເປັນປະເທດທີ່ດ້ອຍພັດທະນາທີ່ມີຄວາມສ່ຽງຕໍ່ກັບການປ່ຽນແປງດິນຟ້າອາກາດ, ສປປ ລາວ ຕ້ອງການທຶນຫຼາຍຂຶ້ນ ເພື່ອຮັບປະກັນວ່າ ການພັດທະນາເສດຖະກິດ ຮັບປະກັນຄວາມຍືນຍົງຂອງສິ່ງແວດລ້ອມ ແລະ ມີຄວາມພ້ອມໃນການຮັບມືກັບການປ່ຽນແປງດິນຟ້າອາກາດ. ເອກະສານທີ່ໄດ້ຮັບການເຜີຍແຜ່ໃນມື້ນີ້ ຈະໄດ້ຊ່ວຍໃຫ້ ສປປ ລາວ ສາມາດປະຕິບັດແຜນຂອງຕົນ ທີ່ສອດຄ່ອງກັບວາລາ ປີ 2030 ເພື່ອການພັດທະນາແບບຍືນຍົງ ແລະ ຂໍ້ຕົກລົງປາຣີວ່າດ້ວຍການແກ້ໄຂການປ່ຽນແປງດິນຟ້າອາກາດ,".

ຄວາມສຳຄັນຂອງການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໄດ້ຖືກເນັ້ນໜັກ ໂດຍປະທານກອງປະຊຸມ ທ່ານ ນາງ ບຸນຄຳ ວໍລະຈິດ, ຮອງລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ ໃນລະຫວ່າງການເປີດກອງປະຊຸມວ່າ:
"ໃນຂະນະທີ່ພວກເຮົາຮຽນຮູ້ວິທີປັບຕົວໃຫ້ເຂົ້າກັບການປ່ຽນແປງດິນຟ້າອາກາດ, ພວກເຮົາຈະເຮັດໃຫ້ດີທີ່ສຸດໃນການວາງຂອບວຽກທາງກົດໝາຍ, ຍຸດທະສາດ ແລະ ວິໄສທັດ. ຕົວຢ່າງ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ສະບັບປະຈຸບັນ ໄດ້ກຳນົດການຫັນປ່ຽນໄປສູ່ການເຕີບໂຕສີຂຽວ ເນື່ອງຈາກວ່າເປັນຫົນທາງໄປສູ່ການຫຼຸດຜ່ອນຄວາມທຸກຍາກໃນ ສປປ ລາວ ແບບຍືນຍົງ."

ປະຈຸບັນນີ້, ອົງການສະຫະປະຊາຊາດ ເພື່ອການພັດທະນາ ກຳລັງສະໜັບສະໜູນ ແລະ ຈັດຕັ້ງປະຕິບັດຫຼາຍໂຄງການໃນ ສປປ ລາວ ທີ່ຊ່ວຍທັງສະຖາບັນຂອງລັດ ແລະ ຊຸມຊົນໃນທ້ອງຖິ່ນ ໃນລະຫວ່າງການຫັນປ່ຽນ ເພື່ອຮັບປະກັນວ່າ ສປປ ລາວ ສາມາດຮັກສາ ແລະ ຂະຫຍາຍຜົນສຳເລັດຂອງການພັດທະນາໃນຫຼາຍທົດສະວັດທີ່ຜ່ານມາ.


**<u>ສຳລັບຂໍ້ມູນເພີ່ມຕື່ມ, ກະລຸນາຕິດຕໍ່:</u>**
*ທ່ານ ນາງ ມາກາເຣັດ ໂຈນສ ວິນລ່ຽມ*
*ຫົວໜ້າພະແນກຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການປ່ຽນແປງດິນຟ້າອາກາດ*
*ອົງການສະຫະປະຊາຊາດ ເພື່ອການພັດທະນາ*
*Margaret.jones.williams@undp.org*
*+856 20 5551 5876*

*ທ່ານ ນາງ ອິດິໂກ ຮາໂມສ*
*ຊ່ຽວຊານດ້ານການສື່ສານ, ອົງການສະຫະປະຊາດ ປະຈຳ ສປປ ລາວ*
*ildiko.hamos@one.un.org*
*+856 20 7717 7913*